**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 03 / ຈຂ ອປ

ວັນທີ 15 ມັງກອນ 2017

ຄຳສັ່ງ

**ວ່າດ້ວຍ ເອົາໃຈໃສ່ຕໍ່ການຄຸ້ມຄອງສັດລ້ຽງ ຂອງປະຊາຊົນ ທົ່ວແຂວງອັດຕະປື**

**ເຖິງ:** ບັນດາ ເຈົ້າເມືອງ 05 ຕົວເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ

**ເລື່ອງ:** ການເອົາໃຈໃສ່ຕໍ່ການຄຸ້ມຄອງສັດລ້ຽງ ຂອງປະຊາຊົນ ທົ່ວແຂວງອັດຕະປື

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ໝວດ IVມາດຕາການ 20 ສະບັບເລກທີ 68/ສພຊ,ລົງວັນທີ 14/ທັນວາ/2015 ວ່າດ້ວຍ ສິດ ແລະ ຫນ້າທີ່ຂອງ ເຈົ້າແຂວງ
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 03/ສພຊ,ລົງວັນທີ 25 ກໍລະກົດ 2008

ເພື່ອສືບຕໍ່ຊຸກຍູ້ສົ່ງເສີມທ່າແຮງໃນການລ້ຽງສັດ ແລະ ຊັບພະຍາກອນສັດລ້ຽງຂອງແຂວງໃຫ້ນັບມື້ຂະຫຍາຍຕົວ ແນໃສ່ຮັບປະກັນການສະໜອງອາຫານໃຫ້ພຽງພໍ ແລະ ຜະລິດເປັນສິນຄ້າທີ່ມີຄຸນນະພາບ ແລະ ມີຄວາມປອດໄພຕໍ່ ຜູ້ບໍລິໂພກທັງເປັນການສ້າງເງື່ອນໄຂໃຫ້ແກ່ການສ້າງ ແລະ ຂະຫຍາຍອຸດສະຫະກຳປຸງແຕ່ງຜະລິດຕະພັນສັດເພື່ອປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງແຂວງ ໃຫ້ມີຄວາມເຂັ້ມແຂງທັງເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນນັບມື້ດີຂຶ້ນ; ຕະລອດໄລຍະຜ່ານມາ ແຂວງອັດຕະປື ໄດ້ຊຸກຍູ້ສົ່ງເສີມການລ້ຽງສັດຂອງປະຊາຊົນ ໃນຮູບແບບຟາມຫລາຍຂຶ້ນ ເປັນຕົ້ນ: ການລ້ຽງງົວ, ໝູ, ແບ້, ສັດປີກ ແບບຟາມຂະໜາດນ້ອຍຂອງປະຊາຊົນ ກຳລັງຂະຫຍາຍຕົວຢ່າງຕໍ່ເນື່ອງ . ແຕ່ຄຽງຄູ່ກັນນັ້ນ, ກໍ່ຍັງມີຫລາຍຄອບຄົວ, ຫລາຍບ້ານທີ່ຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ການຄຸ້ມຄອງສັດລ້ຽງຂອງຕົນ ທີ່ກໍ່ໃຫ້ເກີດມີ ຜົນກະທົບ ຕໍ່ ການພັດທະນາຈຳນວນໜຶ່ງເຊັ່ນ: ການລ້ຽງແບບປະປ່ອຍຕາມທຳມະຊາດ ຂາດຄອກແຫລ່ງ, ຂາດອາຫານ ແລະ ມີຜົນກະທົບຕໍ່ການສັນຈອນຕາມເສັ້ນທາງ, ມີຜົນກະທົບຕໍ່ພືດຜົນຂອງຊາວກະສິກອນ, ມີຄວາມຫຍຸ້ງຍາກ ຕໍ່ການຕິດຕາມການເກີດພະຍາດຂອງສັດລ້ຽງ ທັງເຮັດໃຫ້ບໍ່ມີຄວາມຈົບງາມຕາມຕົວເມືອງ ແລະ ເທດສະບານ.

ເພື່ອເປັນການຄຸ້ມຄອງສັດລ້ຽງໃຫ້ຖືກຕາມລະບຽບກົດໝາຍ ຮັບປະກັນການຂະຫຍາຍຕົວຂອງສັດລ້ຽງຂອງປະຊາຊົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແແຂວງ ໃຫ້ ມີຄວາມເຂັ້ມແຂງ ແລະ ຍືນຍົງ

## ເຈົ້າແຂວງ ອອກຄຳສັ່ງ

1. ໃຫ້ພະແນກກະສິກຳແລະປ່າໄມ້ແຂວງ ຊີ້ນຳຂະແໜງລ້ຽງສັດແລະການປະມົງ, ຫ້ອງການກະສິກຳແລະປ່າໄມ້ເມືອງກວດກາຄືນບັນດານິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງສັດລ້ຽງ ເພື່ອຜັນຂະຫຍາຍເປັນອັນລະອຽດໃຫ້ເໝາະສົມກັບແຕ່ລະທ້ອງຖິ່ນ.

2. ໃຫ້ບັນດາເຈົ້າເມືອງ 5 ຕົວເມືອງ ເອົາໃຈໃສ່ຊີ້ນຳບັນດາພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການເທດສະບານເມືອງ, ປກສ ເມືອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເພື່ອ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດໃຫ້ມີຄວາມເຂັ້ມງວດ.

3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຊຸກຍູ້ສົ່ງເສີມການພັດທະນາດ້ານການລ້ຽງສັດ ແລະ ການສັດຕະວະແພດໃຫ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ ເພື່ອຫັນການລ້ຽງສັດຂອງຄອບຄົວ ແບບທຳມະຊາດ ໃຫ້ມີການຄຸ້ມຄອງລ້ຽງດູຕາມຫລັກວິຊາການ ແລະ ຫັນການຜະລິດ ທຸລະກິດການລ້ຽງສັດ ໄປສູ່ການຜະລິດແບບອຸດສະຫະກຳ ແລະ ທັນສະໄໝເທື່ອລະກ້າວ ພ້ອມກັນນັ້ນ ກໍ່ຕ້ອງ ປົກປັກຮັກສາ ພັນພື້ນເມືອງທີ່ດີບໍ່ໃຫ້ສູນພັນ ; ສົມທົບກັບການປັບປຸງພັນສັດໃໝ່ທີ່ມີຄຸນນະພາບ ແລະ ສະມັດຖະພາບສູງ

4. ຕ້ອງເອົາການພັດທະນາການລ້ຽງສັດ ໄປຄຽງຄູ່ກັບການສັດຕະວະແພດ ຖືເອົາການກັນພະຍາດສັດເປັນຕົ້ນຕໍ ເອົາການຄວບຄຸມ ແລະ ກຳຈັດພະຍາດ ເປັນສຳຄັນ ດ້ວຍການ ສັກຢາກັນພະຍາດສັດ ແຕ່ລະຊະນິດໃຫ້ ໄດ້ 70%; ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ປະຕິບັດຫລັກການຮັກສາອານາໄມຄອກລ້ຽງສັດໃຫ້ ສະອາດ ເພື່ອຫລຸດຜ່ອນການເກີດພະຍາດແກ່ສັດລ້ຽງ

5. ປົກປ້ອງຜົນປະໂຫຍດຂອງຜູ້ບໍລິໂພກ ແລະ ຜູ້ປະກອບການ ກ່ຽວກັບການລ້ຽງສັດ ແລະ ການສັດຕະວະແພດຕາມລະບຽບກົດໝາຍ

6. ໃຫ້ຖືເອົາການຄຸ້ມຄອງ, ການກວດກາ ແລະ ການຂະຫຍາຍການລ້ຽງສັດ ແລະ ການສັດຕະວະແພດ ຕິດພັນຢ່າງກົມກຽວກັບການຜະລິດ ກະສິກຳ ແລະ ປ່າໄມ້ ແບບຍືນຍົງ ພ້ອມທັງປົກປັກຮັກສາດິນ, ແຫລ່ງນ້ຳ, ສິ່ງແວດລ້ອມ ແລະ ຄວາມສົມດູນຂອງ ລະບົບນິເວດທຳມະຊາດ ແລະ ການນຳໃຊ້ສັດລ້ຽງຢ່າງມີປະສິດທິຜົນ.

7. ບັນດາຜູ້ປະກອບການ, ຊາວກະສິກອນ ຜູ້ປູກຝັງ ແລະ ລ້ຽງສັດ ຈົ່ງໄດ້ເອົາໃຈໃສ່ດັ່ງນີ້:

7.1 ໃຫ້ເອົາການລ້ຽງສັດ ເຂົ້າສູ່ລະບົບລະບຽບ ,ຈັດສັນສະຖານທີ່ທີ່ມີຄວາມເໝາະສົມເພື່ອສ້າງຄອກ ສ້າງແຫລ່ງ ແລະ ຜູກມັດ ໃຫ້ມີຄວາມສະດວກໃນການຄຸ້ມຄອງ ຕິດຕາມການຕິດເຊື້ອພະຍາດສັດ ແລະ ການໃຫ້ອາຫານສັດ;

7.2 ຕ້ອງເອົາໃຈໃສ່ໃນການປູກຫຍ້າອາຫານສັດ, ການເກັບຮັກສາເຟືອງແຫ້ງ, ສ້າງກ້ອນແຮ່ທາດ ເພື່ອໃຫ້ສັດມີອາຫານກິນຢ່າງພຽງພໍ;

7.3 ຫ້າມມີການກະທຳໃດໜຶ່ງທີ່ພາໃຫ້ເກີດການລະບາດຂອງພະຍາດສັດ, ການນຳໃຊ້ສານເຄມີທີ່ເປັນອັນຕະລາຍ ຊຶ່ງເປັນຜົນສະທ້ອນອັນບໍ່ດີຕໍ່ສຸຂະພາບສັດ ແລະ ຄົນ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

7.4 ຫ້າມເຄື່ອນຍ້າຍ, ນຳເຂົ້າ, ສົ່ງອອກ, ຂົນສົ່ງສັດ ແລະ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ໂດຍບໍ່ສອດຄ່ອງກັບລະບຽບກົດໝາຍ ນັບທັງການປອມແປງເອກະສານກ່ຽວກັບສັດ;

7.5ຫ້າມຄ້າ - ຂາຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ປະເພດຫວງຫ້າມ ຫລື ບໍ່ຖືກຕ້ອງຕາມລະບຽບກົດໝາຍກຳນົດໄວ້

7.6ຫ້າມຂ້າ, ຄົວ ແລະ ບໍລິໂພກສັດເຫງົາ, ເຈັບ ຫລື ຕາຍໂດຍບໍ່ຮູ້ສາເຫດ, ເປັນພະຍາດລະບາດສັດຫລືບໍ່ທັນໝົດໄລຍະຂອງສານຕົກຄ້າງ;

7.7 ຫ້າມຖິ້ມຊາກ ແລະ ຊີ້ນສ່ວນສັດຕາຍ ຕາມສະຖານທີ່ສາທາລະນະ ແລະ ສະຖານທີ່ອື່ນ;

7.8ຫ້າມຈຳໜ່າຍ ຫລື ຊຸກເຊື່ອງສັດ ແລະ ຜະລິດຕະພັນສັດ ທີ່ເປັນພະຍາດ ຫລື ຈະເປັນພະຍາດ

7.9 ຫ້າມຂ້າສັດຖືພາມານ , ສັດລາກແກ່ ຫລື ສັດຢູ່ໃນໄລຍະທີ່ນຳໃຊ້ ເປັນແນວພັນ ;

7.10ຫ້າມມີການທໍລະມານສັດ ຫລື ການກະທຳອື່ນເປັນການລະເມີດລະບຽບກົດໝາຍ ກ່ຽວກັບການລ້ຽງສັດ ແລະ ການສັດຕະວະແພດ

7.11 ຫ້າມລ້ຽງສັດໃນເຂດຊຸມຊົນ,ເທດສະບານເມືອງ ແລະ ສະຖານທີ່ທີ່ບໍ່ຢູ່ໃນເຂດລ້ຽງສັດ;

7.12 ຫ້າມປ່ອຍສັດຊະຊາຍໃນຊຸມຊົນ ເທດສະບານເມືອງ ແລະຕາມຖະໜົນຫລວງ ;

7.13 ກໍລະນີ ເຈົ້າຂອງສັດລ້ຽງຫາກລະເມີດຕໍ່ຂໍ້ຫ້າມ ທີ່ກ່າວມາຂ້າງເທິງນັ້ນ ຊຶ່ງໄດ້ສ້າງຄວາມເສຍຫາຍຕໍ່ພືນລະປູກ ຫລື ວັດຖຸສິ່ງຂອງໃນສາທາລະນະ ເຈົ້າຂອງສັດລ້ຽງຈະໄດ້ຮັບຜິດຊອບ ຕາມລະບຽບກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ມາດຕາ 92,93,94,95,96 ແລະ 97

8. ຊາວກະສິກອນຜູ້ປະກອບການ ດ້ານການປູກຝັງ ໃຫ້ເອົາໃຈໃສ່ຕໍ່ການຮັກສາພືນລະປູກຂອງຕົນ ດ້ວຍການເຮັດຮົ້ວ ຫລື ສິ່ງກັກກັນ ເພື່ອປ້ອງກັນການເຂົ້າທຳລາຍຂອງສັດລ້ຽງປະເພດຕ່າງໆ

9. ທຸກພາກສ່ວນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ

10. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳສັ່ງໃໝ່ປ່ຽນແທນ

**ເຈົ້າແຂວງ**

ປອ ນາມ ວິຍະເກດ

**ບ່ອນນຳສົ່ງ:**

| | | |
|---|---|---|
| - ເຈົ້າເມືອງ 5 ເມືອງ | ເມືອງ ລະ | 1 ສະບັບ ເພື່ອຊີ້ນຳ ແລະ ຈັດຕັ້ງປະຕິບັດ |
| -ພະແນກກະສິກຳ ແລະ ປ່າໄມ້ | | 1 ສະບັບ ເພື່ອ ຈັດຕັ້ງປະຕິບັດ |
| - ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເມືອງລະ | | 1 ສະບັບ ເພື່ອຈັດຕັ້ງປະຕິບັດ |
| - ສຳເນົາ | | 1 ສະບັບ |